ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 6: Oral Stories

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ

**ລະຫັດ:** 0907108

**ບົດທີ 2:** ພື້ນສືບ

**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ

**ປີ:** 3

**ພາກຮຽນ:** 1

**ສົກຮຽນ:** 2023-2024

ເວລາ: 90 ນາທີ

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ຄວາມໝາຍ ແລະ ຈຸດພິເສດຂອງພື້ນສືບ<br>- ການກຳເນີດ ແລະ ການຂະຫຍາຍຕົວຂອງພື້ນສືບ</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ຄວາມໝາຍ ແລະ ຈຸດພິເສດຂອງພື້ນສືບ<br>- ການກຳເນີດ ແລະ ການຂະຫຍາຍຕົວຂອງພື້ນສືບ</td><td>ຄຳຖາມຫຼັກ (Questions):<br>1) ພື້ນສືບແມ່ນຫຍັງ?<br>2) ພື້ນສືບມີຈຸດພິເສດແນວໃດ?<br>3) ພື້ນສືບກຳເນີດມາຈາກໃສ?<br>4) ພື້ນສືບຂະຫຍາຍຕົວແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງຄວາມໝາຍ, ຈຸດພິເສດ, ການກຳເນີດ ແລະການຂະຫຍາຍຕົວຂອງພື້ນສືບ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງ ຄວາມໝາຍ, ຈຸດພິເສດ, ການກຳເນີດ ແລະການຂະຫຍາຍຕົວຂອງພື້ນສືບ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຣວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
</table>

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

- **ສື່ການສອນມີ:**
  ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.
- **ກິດຈະກຳການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງເນື້ອໃນຂອງເທບນິຍາ "ປູ່ເຍີ-ຍ່າເຍີ" ແລະ "ໝາກນ້ຳເຕົ້າປຸງ".

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 3**
**ພື້ນສືບ**

**1. ຄວາມໝາຍ ແລະ ຈຸດພິເສດຂອງພື້ອນສືບ** ( 30 ນາທີ)

<u>**ກິດຈະກຳ 1:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ພື້ນສືບແມ່ນຫຍັງ?
  2) ພື້ນສືບມີຈຸດພິເສດແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (25 ນາທີ)

ພື້ນສືບ ແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງ ເຊິ່ງມີເນື້ອໃນເວົ້າເຖິງບຸກຄົນ ຫຼື ເຫດການໃນປະຫວັດສາດ, ເບື້ອງຕົ້ນພື້ນສືບຍັງເປັນບົດເລື່ອງເລົ່າ ກ່ຽວກັບບຸກຄົນໃດໜຶ່ງ ຫຼື ເຫດການໃດໜຶ່ງ ທີ່ມີໃນຈຸ້ມເຈື້ອເຊື້ອສາຍຄົນເຮົາເທົ່ານັ້ນ ຕໍ່ມາບົດເລື່ອງເລົ່ານັ້ນ ໄດ້ຖືກເຫຼົ່າຕໍ່ກັນໄປຢ່າງກວ້າງຂວາງໃນທ້ອງຖິ່ນ ທ້ອງເຂດ ແລະ ທົ່ວປະເທດ. ພື້ນສືບໄດ້ກຳເນີດ ແລະ ຂະຫຍາຍຕົວແຮງ ໃນໄລຍະສືບຕໍ່ມາຈາກຍຸກສະໄໝຂອງເທບນິຍາຍ ເມື່ອຄົນເຮົາໄດ້ມີສະຕິກຽ່ວກັບຈຸ້ມເຈື້ອເຊື້ອສາຍຂອງຕົນຢ່າງຈະແຈ້ງສົມຄວນແລ້ວ, ມັນເປັນການບັນທຶກ ແລະ ຈື່ຈຳຄືນບັນດາເຫດການໃຫຍ່ໆ ແລະ ສຳຄັນທີ່ມີລັກສະນະປະຫວັດສາດ ຂອງກຸ່ມຄົນໃດໜຶ່ງເຊັ່ນ: ການແຜ່ອຳນາດການປົກຄອງ , ການເຮັດສົງຄາມ ລະຫວ່າງກຸ່ມຄົນນີ້ກັບກຸ່ມຄົນອື່ນ ເພື່ອຍາດຊີງເຂດນ້ຳແດນດິນ, ເຂດທຳມາຫາກິນເຊິ່ງກັນ ແລະ ກັນ, ການລິເລີ່ມສ້າງຕັ້ງອານາຈັກ ແລະ ການກຳເນີດຊາດໃນສະໄໝບູຮານ ແລະອື່ນໆ. ສະນັ້ນ, ພື້ນສືບຈຶ່ງມີຮູບການຢາກຄ້າຍຄືເທບນິຍາຍ, ແຕ່ເນື້ອໃນພັດມີລັກສະນະສັງຄົມຢ່າງຈະແຈ້ງ,ເວົ້າອີກຢ່າງໜຶ່ງຮູບການປະດິດແຕ່ງຂອງພື້ນສືບໄດ້ຮັບຜົນສະທ້ອນຈາກເທບນິຍາຍ ແລະ ທ່າອ່ຽງຂະຫຍາຍຕົວເພື່ອກາຍມາເປັນນິທານ. ດ້ວຍເຫດນັ້ນໃນໄລຍະຜ່ານມາຈຶ່ງມີນັກຄົ້ນຄວ້າຫຼາຍຄົນຍັງຢຸດໆຢ່ອນໆບໍ່ກ້າແຍກພື້ນສືບອອກເປັນເລື່ອງໜຶ່ງຕ່າງຫາກ, ບາງຄົນພັດຍັງເອົາພື້ນສືບເຂົ້າລວມກັບເທບນິຍາຍ ແລະ ຈຳນວນໜຶ່ງອີກ ພັດຖືເອົາພື້ນສືບເປັນນິທານປະເພດໜຶ່ງທີ່ມີເນື້ອ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ໃນປະຫວັດສາດ, ເບິ່ງລວມແລ້ວຄວາມສຳນຶກກ່ຽວກັບພື້ນສືບບໍ່ທັນຈະແຈ້ງ ແລະ ເປັນເອກະພາບເທື່ອນັບທັງການເອີ້ນຊື່ຂອງມັນອີກດ້ວຍ. ຕໍ່ມາໂດຍສະເພາະໃນຊຸມປີມໍ່ໆມານີ້ຄວາມວ່າ “ພື້ນສືບ”ໄດ້ກາຍເປັນຄວາມສຳນຶກສະເພາະໝາຍເຖິງເລື່ອງເລົ່າພື້ນເມືອງປະເພດໜຶ່ງຕ່າງຫາກ.

ເທບນິຍາຍເຖິງແມ່ນວ່າມີເນື້ອໃນປະຫວັດສາດ ແລະ ມີລັກສະນະສັດຈະທັດໂດຍມີຮູບພາບ,ຮູບປະພັນຕົວລະຄອນຕ່າງໆຕິດພັນກັບຮ່ອງຮອຍປະຫວັດສາດສະໄໝບູຮານ ແຕ່ກໍ່ບໍ່ທັນສະແດງໃຫ້ເຫັນບຸກຄົນ ແລະເຫດການປະຫວັດສາດອັນລະອຽດຈະແຈ້ງ ແລະ ເລິກເຊິ່ງເໝືອນດັ່ງຕົວລະຄອນໃນພື້ນສືບ (ກຽງແກ້ວ ນອນນະວົງ ແລະ ຄະນະ, 2001).

ພື້ນສືບກັບນິທານກໍມີການພົວພັນເຊິ່ງກັນ ແລະ ກັນ, ແຕ່ມີຄວາມແຕ່ຕ່າງກັນເປັນພື້ນຖານຄື: ນິທານສ່ວນຫຼາຍກຳເນີດເກີດຂຶ້ນໃນສັງຄົມທີ່ມີຊົນຊັ້ນ, ເນື້ອໃນຕົ້ນຕໍຂອງນິທານເຄີຍເວົ້າເຖິງການພົວພັນໃນສັງຄົມ, ສ່ວນພື້ນສືບແມ່ນເວົ້າເຖິງສ່ວນບຸກຄົນ ຫຼື ເຫດການທີ່ຕິດພັນກັບປະຫວັດສາດ. ໃນໄລຍະຜ່ານມາຍັງມີບາງຄົນບໍ່ທັນຈຳແນກໄດ້ຢ່າງຈະແຈ້ງລະຫວ່າງພື້ນສືບປະຫວັດສາດກັບນິທານທີ່ອະທິບາຍເຖິງກົກເຄົ້າການກຳເນີດກ່ຽວກັບທຳມະຊາດ ແລະ ສະຖານທີ່ຕ່າງໆເຊັ່ນ: ເລື່ອງ “ ພູທ້າວ ພູນາງ ” , “ ພູບາຈຽງ ກັບພູມະໂລງ” ເຫຼົ່ານີ້ເປັນຕົ້ນ. ຈຸດປະສົງຕົ້ນຕໍຂອງການປະດິດແຕ່ງນິທານປະເພດນີ້ ບໍ່ພຽງແຕ່ອະທິບາຍກົກເຄົ້າການກຳເນີດຂອງຮ່ອງຮອຍ ແລະ ປາກົດການທຳມະຊາດໂດຍສະເພາະເທົ່ານັ້ນ ຫາກຍັງສວຍໃຊ້ການອະທິບາຍນັ້ນ ເພື່ອເວົ້າເຖິງບັນຫາສັງຄົມເປັນຕົ້ນຕໍ. ອາດເວົ້າໄດ້ວ່ານິທານປະເພດນີ້ ຢູ່ລະຫວ່າງກາງຂອງພື້ນສືບ ແລະ ນິທານອັດສະຈັນ. ແບບວິທີເລົ່າພື້ນສືບ ກໍຕ່າງກັນກັບແບບວິທີເລົ່ານິທານຄື: ພື້ນສືບ ແມ່ນເລື່ອງເລົ່າກ່ຽວກັບເຫດການ ຫຼື ບຸກຄົນປະຫວັດສາດ , ສ່ວນນິທານແມ່ນເລື່ອງອະທິບາຍປາກົດການ ແລະ ຮ່ອງຮອຍຂອງທຳມະຊາດ. ການອະທິບາຍໃນນິທານແບບນີ້  ມີລັກສະນະເວົ້າໂຍກ ແລະ ກໍບໍ່ອາດຈະເປັນຄວາມຈິງໄດ້. ສະນັ້ນ ພື້ນສືບ ຈິ່ງມີຄຸນຄ່າ ຫຼື ມີລັກສະນະໜັກມາທາງດ້ານປະຫວັດສາດຈະແຈ້ງ, ສ່ວນນິທານທີ່ອະທິບາຍກ່ຽວກັບສະຖານທີ່ ທ້ອງຖິ່ນເຫຼົ່ານັ້ນພັດມີລັກສະນະສັງຄົມຫຼາຍກ່ວາ.

ພື້ນສືບກຳເນີດ ແລະ ຂະຫຍາຍຕົວແຮງ ໃນສະໄໝກ່ອນທີ່ຄົນເຮົາຈະມີວິຊາປະຫວັດສາດອັນແທ້ຈິງ, ເມື່ອຄົນເຮົາຍັງບໍ່ທັນມີວິຊາປະຫວັດສາດ ພື້ນສືບໄດ້ເຮັດໜ້າທີ່ຈົດຈຳ ແລະ ບັນທຶກບັນດາເຫດການປະຫວັດສາດ ຂອງແຕ່ລະຈຸ້ມເຈື້ອເຊື້ອສາຍ ຂອງແຕ່ລະເຜົ່າຊົນ ກໍຄືບັນດາປະຫວັດສາດຂອງບ້ານເມືອງໂດຍທົ່ວໄປ. ເມື່ອມາຮອດສະໄໝຄົນເຮົາ ເລີ່ມມີວິຊາປະຫວັດສາດອັນແທ້ຈິງແລ້ວ ພື້ນສືບກໍຍັງກຳເນີດ ແລະ ຂະຫຍາຍຕົວໃນລະດັບຕ່າງກັນ, ອີງຕາມສະພາບຂອງການຈົດກ່າຍ ຂອງວິຊາປະຫວັດສາດ, ຖ້າວ່າປະຫວັດສາດ ຫາກຈົດກ່າຍບັນດາເຫດການປະຫວັດສາດ ໄດ້ຄົບຖ້ວນຊັດເຈນແລ້ວລັກສະນະຂອງພື້ນສືບກໍຫຼຸດຜ່ອນລົງ ກົງການຂ້າມຖ້າວ່າເຫດການ ແລະ ຕົວລະຄອນໃດທີ່ປະຫວັດສາດເວົ້າບໍ່ແຈ້ງ ລັກສະນະຂອງພື້ນສືບກໍປາກົດເດັ່ນຂຶ້ນ. ແນ່ນອນວ່າເນື້ອໃນຂອງພື້ນສືບກໍມີການຫັນປ່ຽນໄປຕາມເນື້ອໃນຂອງປະຫວັດສາດ, ດັ່ງນັ້ນ ຈິ່ງອາດເວົ້າໄດ້ວ່າ ພື້ນສືບແມ່ນ: “ ປະຫວັດສາດທີ່ບໍ່ເປັນລາຍລັກອັກສອນ” ແມ່ນປະຫວັດສາດແບບຈື່ຈຳຕາມລັກສະນະຂອງປະຊາຊົນ ຫຼື ເວົ້າອີກຢ່າງໜຶ່ງ ພື້ນສືບແມ່ນເລື່ອງປະຫວັດສາດ ທີ່ປະຊາຊົນເຄີຍເລົ່າສືບຕໍ່ກັນມາ ແຕ່ເຊັ່ນຄົນນີ້ໄປຫາເຊັ່ນຄົນອື່ນ , ແຕ່ທ້ອງຖິ່ນນີ້ໄປຫາ

ທ້ອງຖິ່ນອື່ນ ຕົວຢ່າງຄື: ພະຍາສີໂຄດຕະບອງ, ພື້ນທ້າວຈັນພານິດ, ພື້ນຂຸນບູລົມ, ພື້ນກ່ຽວກັບຂຸນເຈືອງ ເຫຼົ່ານີ້ເປັນຕົ້ນ.

ເຖິງວ່າພື້ນສືບແມ່ນບົດເລື່ອງເລົ່າພື້ນເມືອງ ທີ່ມີການປ່ຽນແປງໄປຕາມກາລະເທສະ, ເຫດການ ແລະ ຕົວລະຄອນປະຫວັດສາດ ຢູ່ໃນພື້ນສືບກໍຍັງມີການຫັນປ່ຽນໄປຕາມທັດສະນະຂອງຄົນ ຜູ້ປະດິດແຕ່ງ ຫຼື ຜູ້ເລົ່າຕໍ່ກັນອີກ (ພູວົງ ໜໍ່ດາລາ ແລະຄະນະ, 2018).

**2. ການກຳເນີດ ແລະການຂະຫຍາຍຕົວຂອງ** (30 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ພື້ນສືບກຳເນີດມາຈາກໃສ?
  2) ພື້ນສືບຂະຫຍາຍຕົວແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (25 ນາທີ)

ອີງຕາມ ບໍ່ແສງຄຳ ວົງດາລາ ແລະຄະນະ (1987), ພື້ນສືບລາວເຮົາເຖິງແມ່ນວ່າ ກຳເນີດ ແລະ ຂະຫຍາຍຕົວແຮງ ໃນສະໄໝກ່ອນທີ່ຊາດເຮົາ ຈະມີວິຊາປະຫວັດສາດອັນແທ້ຈິງກໍຕາມ ແຕ່ພື້ນສືບກໍຍັງບໍ່ຢຸດເຊົາການຂະຫຍາຍຕົວ ແຕ່ໃນສະໄໝນັ້ນເໝືອນດັ່ງເທບນິຍາຍກົງກັນຂ້າມພື້ນສືບຍັງສືບຕໍ່ກຳເນີດ ແລະ ຂະຫຍາຍຕົວໄປພ້ອມໆກັບວິຊາປະຫວັດສາດ ແລະ ວັນນະຄະດີພື້ນເມືອງປະເພດອື່ນໆຕໍ່ມາຈົນເຖິງປະຈຸບັນນີ້. ອີງຕາມເນື້ອໃນ ແລະ ຈຸດພິເສດທີ່ໄດ້ກ່າວມານີ້ຈຶ່ງອາດແບ່ງການກຳເນີດ ແລະ ຂະຫຍາຍຕົວຂອງພື້ນສືບລາວອອກເປັນ 2 ໄລຍະຕົ້ນຕໍດັ່ງນີ້:

**ກ. ໄລຍະກ່ອນສະຕະວັດທີ XIV**

ກ່ອນສະຕະວັດທີ XIV ຄືນຫຼັງເປັນໄລຍະປະຫວັດສາດອັນແສນຍາວນານ ແລະ ກໍເປັນໄລຍະປະຫວັດສາດສະໄໝດຶກດຳບັນຂອງຊາດເຮົາ. ພື້ນສືບຂອງລາວເຮົາໃນສະໄໝນີ້ແມ່ນພື້ນສືບທີ່ມີເນື້ອໃນກົງກັນຂ້າມກັບປະຫວັດສາດຂອງການສ້າງຕັ້ງເມືອງລາວເປັນຕົ້ນຕໍ. ພື້ນສືບ ພະຍາສີໂຄດຕະບອງ, ພື້ນສືບທ້າວຈັນທະພານິດ, ພື້ນສືບກ່ຽວກັບຂຸນເຈືອງ, ພື້ນສືບຂຸນບູລົມ ລ້ວນແລ້ວເປັນເລື່ອງເລົ່າກ່ຽວກັບບຸກຄົນ ຜູ້ເປັນຫົວໜ້າຂອງແຕ່ລະກຸ່ມເຜົ່າທີ່ປົກຄອງເມືອງບູຮານຕ່າງໆຂອງລາວເຮົາໃນສະໄໝນັ້ນຄືເມືອງສີໂຄດຕະບອງ, ເມືອງຈັນທະບູລີ, ເມືອງປະກັນ, ເມືອງຊຽງດົງຊຽງທອງ ພ້ອມກັນນັ້ນບົດພື້ນສືບຕ່າງໆດັ່ງກ່າວຍັງໄດ້ເລົ່າເຖິງການກຳເນີດ ແລະ ການຂະຫຍາຍຕົວຂອງເມືອງລາວບູຮານເຫຼົ່ານັ້ນດ້ວຍຮູບ ການເຫຼືອເຊື່ອ ແລະ ມະຫັດສະຈັນທີ່ສຸດ. ໂດຍຜ່ານເນື້ອໃນພື້ນສືບກ່ຽວກັບການກຳເນີດເມືອງລາວບູຮານເຫຼົ່ານັ້ນອາດເຫັນໄດ້ວ່າປະຫວັດສາດຂອງລາວສະໄໝນັ້ນຂະຫຍາຍຕົວຕາມສອງແງ່ຄື: ໃນດ້ານໜຶ່ງຊາວບູຮານບັນດາເຜົ່າໄດ້ສ້າງຕັ້ງເມືອງລາວບູຮານຂະໜາດໃຫຍ່ຂຶ້ນກັບທີ່ຫຼາຍແຫ່ງເຊັ່ນ: ເມືອງສີໂຄດຕະບອງ, ເມືອງຈັນທະບູລີ, ເມືອງປະກັນ, ເມືອງຊຽງດົງຊຽງທອງ ແລະ ອື່ນໆ ໃນດ້ານໜຶ່ງອີກຊົນເຜົ່າໄທລາວທີ່ຕັ້ງ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ເມືອງຂະໜາດໃຫຍ່ຂອງຕົນຢູ່ທາງພາກເໜືອນັ້ນໄດ້ມີການເຄື່ອນຍ້າຍມາສົມທົບກັບບັນດາຊົນເຜົ່າລາວທີ່ຕັ້ງພູມລຳເນົາກະແຈກກະຈາຍຢູ່ຕາມຂົງເຂດພາກໃຕ້ສ້າງຕັ້ງເມືອງໃຫຍ່ຂຶ້ນຫຼາຍແຫ່ງເຊັ່ນ: ເມືອງຊວາ ຢູ່ເຂດຊຽງດົງຊຽງທອງເຊິ່ງໄດ້ຂະຫຍາຍຕົວຈະເລີນຮຸ່ງເຮືອງຈົນກາຍເປັນນະຄອນຫຼວງຂອງອານາຈັກລາວລ້ານຊ້າງຂຶ້ນໃນໄລຍະຕໍ່ມາ. ເຫດການປະຫວັດສາດນີ້ໄດ້ສະແດງຢ່າງຈະແຈ້ງສົມຄວນໃນພື້ນສືບຕ່າງໆເຊັ່ນ: ພື້ນສືບສີໂຄດຕະບອງ, ພື້ນສືບທ້າວຈັນທະພານິດ, ພື້ນສືບຂຸນບູລົມ ເຫຼົ່ານີ້ເປັນຕົ້ນ.ມາຮອດສະໄໝຂຸນລໍບັນດາຊົນເຜົ່າໄທລາວໄດ້ເຕົ້າໂຮມກັນເປັນປຶກແຜ່ນກ່ອນໝູ່ຢູ່ເມືອງຊວາ ແລະ ຂຸນລໍເປັນຜູ້ສືບທອດຂຸນບູລົມກໍ່ຕັ້ງສູນກາງປົກຄອງຢູ່ເມືອງຊວາໃນຄາວນັ້ນ. ນອກຈາກພື້ນຂຸນບູລົມແລ້ວຍັງມີພື້ນສືບຫຼາຍໆບົດອີກ ກ່ຽວກັບເມືອງຊວາ ແລະ ຂຸນລໍ. ພື້ບສືບປະຫວັດສາດໄລຍະນີ້ມີການຂະຫຍາຍຕົວເປັນບາດກ້າວໃຫຍ່, ນັບທັງການປະກອບສ້າງໂຄງຮ່າງບົດເລື່ອງ ແລະ ທັງເນື້ອໃນປະຫວັດສາດຂອງມັນອີກດ້ວຍ.

ໃນໄລຍະກ່ອນສະຕະວັດທີ XIV ພື້ນສືບຂອງລາວໄດ້ກຳເນີດ ແລະ ຂະຫຍາຍຕົວແຮງ, ມີເນື້ອໃນປະຫວັດສາດ ແລະ ຍັງຮັກສາລັກສະນະເກົ່າແກ່ບູຮານຂອງມັນໄວ້ຢ່າງຄົບຖ້ວນ. ການຮັບຜົນສະທ້ອນຈາກແນວຄິດຊົນຊັ້ນປົກຄອງ ແລະ ແນວຄິດສາສະໜາພຸດກໍບໍ່ທັນຈະແຈ້ງ ແລະ ເລິກເຊິ່ງເທື່ອ. ປະຫວັດສາດຂອງລາວໄລຍະນີ້ຍັງແມ່ນປະຫວັດສາດເລົ່າປາກຕໍ່ປາກໂດຍຜ່ານບົດພື້ນສືບຕ່າງໆເປັນຕົ້ນຕໍ. ດັ່ງນັ້ນລະຫວ່າງພື້ນສືບກັບປະຫວັດສາດຈຶ່ງມີລັກສະນະປົນເປໃກ້ຊິດຕິດພັນກັນຫຼາຍທີ່ສຸດ.

**ຂ. ໄລຍະສະຕະວັດທີ XIV ຂຶ້ນມາ.**

ພາຍຫຼັງສະຕະວັດທີ XIV ໂດຍສະເພາະແມ່ນຕັ້ງແຕ່ປີ 1353 ເປັນຕົ້ນມາປະຫວັດສາດທີ່ຂຽນເປັນລາຍລັກອັກສອນຂອງລາວເຮົາຈຶ່ງເກີດຂຶ້ນ, ຢູ່ໃນໄລຍະນີ້ເອງເພື່ອເປັນການຟື້ນປະຫວັດສາດຂອງຊາດເຮົາໃນໄລຍະກ່ອນນັ້ນຄືນໃຫ້ເປັນລະບົບຄົບຖ້ວນ, ບັນດານັກປາດ ຄູບາອາຈານທັງຫຼາຍຈຶ່ງໄດ້ເກັບກຳເອົາບົດພື້ນສືບຕ່າງໆມາຈົດກ່າຍ ແລະ ຈົດບັນທຶກເປັນປຶ້ມເຊັ່ນ: ປຶ້ມພົງສະວາດານລາວ ແລະ ປຶ້ມໜັງສືນິທານຂຸນບູລົມ.

ສະພາບການດັ່ງກ່າວນີ້ໄດ້ເຮັດໃຫ້ພື້ນສືບປະຫວັດສາດປົນເປກັນຕື່ມ, ທັງເຮັດໃຫ້ເນື້ອໃນປະຫວັດສາດຂອງບົດພື້ນສືບມີການຫັນປ່ຽນໄປຕາມທັດສະນະຂອງຜູ້ຂຽນ. ຈຸດປະສົງຂອງການຈົດກ່າຍບົດພື້ນສືບຕ່າງໆນັ້ນໄວ້ ເພື່ອຍົກສູງຄຸນຄ່າທາງດ້ານປະຫວັດສາດຂອງບົດເລື່ອງ. ແຕ່ໃນຕົວຈິງພັດເຮັດໃຫ້ເນື້ອແທ້ ແລະ ລັກສະນະຂອງພື້ນສືບມີການຫັນປ່ຽນ ແລະ ຫຼຸດຜ່ອນລົງຫຼາຍທີ່ສຸດ ແລະ ສະແດງອອກໃນບາງດ້ານຄື: ຜູ້ທີ່ຂຽນໄດ້ຍົກຍໍຕົວລະຄອນໃນພື້ນສືບທຽບເທົ່າກັບຟ້າແຖນທັງຫຼາຍເຮັດໃຫ້ພື້ນສືບມີລັກສະນະສັກສິດ ແລະ ມະຫັດສະຈັນ, ເປັນການຍົກຍໍບົດບາດຂອງເຈົ້າຂຸນມູນນາຍໃນສັງຄົມໃຫ້ສູງ ແລະ ມີຄວາມສັກສິດດັ່ງຟ້າແຖນ. ເປັນທີ່ຮູ້ກັນດີວ່າຜູ້ຂຽນສະໄໝນັ້ນແມ່ນຄູບາອາຈານເປັນຕົ້ນຕໍ. ດັ່ງນັ້ນ, ນັບທັງພື້ນສືບ ແລະ ເທບນິຍາຍຂອງລາວເຮົາຈຶ່ງໄດ້ຮັບຜົນສະທ້ອນຈາກລະບົບແນວຄິດຂອງຊົນຊັ້ນປົກຄອງ ແລະ ລະບົບແນວຄິດສາສະໜາຢ່າງເລິກເຊິ່ງສົມຄວນ. ຕົວລະຄອນພະອິນ, ພະພົມ ຫຼື ຜີຍັກຕ່າງໆ ເຊິ່ງມີກົກເຄົ້າການເຊື່ອຖືຈາກສາສະໜາພາມ ແລະ ພຸດທີ່ແຜ່ລາມຢູ່ອິນເດຍກໍໄດ້ແຊກຊຶມເຂົ້າມາໃນພື້ນສືບລາວເຮົາຢ່າງຫຼວງຫຼາຍທີ່ສຸດ.

ພາຍຫຼັງສະຕະວັດທີ XIV ມານີ້ແມ່ນໄລຍະປະຫວັດສາດຍາວນານສົມຄວນເຊິ່ງອາດແບ່ງອອກເປັນຫຼາຍສະໄໝແຕກຕ່າງກັນ. ບົດພື້ນສືບລາວເຮົາໃນສະໄໝນີ້ໄດ້ສ່ອງແສງເຖິງການປົກປັກຮັກສາ ແລະ ສ້າງສັນລະບອບ

ສັກດີນາແບບລວມສູນ. ສ່ອງແສງການປະດິດສ້າງດ້ານສິລະປະວັດທະນະທຳຄື: ຕຳນານພະທາດຫຼວງ. ນອກຈາກນັ້ນຍັງມີບົດພື້ນສືບທີ່ເວົ້າເຖິງຂະບວນການຕໍ່ສູ້ຕ້ານການຮຸກຮານຂອງເສິກຕ່າງດ້າວທ້າວຕ່າງແດນເຊັ່ນ: ເຈົ້າລາຊະວົງ, ຜູ້ມີບຸນ, ເຈົ້າຟ້າປາໄຈ ເຫຼົ່ານີ້ເປັນຕົ້ນ.

ເຖິງແມ່ນວ່າປະຫວັດສາດໄດ້ຈົດຈຳຂະບວນການຕໍ່ສູ້ດັ່ງກ່າວໄດ້ນັ້ນ ຢ່າງລະອຽດຄົບຖ້ວນແລ້ວກໍຕາມ,ແຕ່ປະຊາຊົນລາວຜູ້ອອກແຮງງານກໍຍັງເອົາເຫດການຕ່າງໆຂອງຂະບວນການເຫຼົ່ານັ້ນມາເຫຼົ່າສູ່ກັນຟັງດ້ວຍຮູບການພື້ນສືບທີ່ມີຊີວິດຊີວາທີ່ສຸດ. ພື້ນສືບໃນໄລຍະນີ້ມີການຂະຫຍາຍຕົວດ້ວຍຮູບການໃໝ່ແລະເນື້ອໃນໃໝ່ປະຊາຊົນໄດ້ພັນລະນາຜູ້ນຳຂອງຂະບວນການຕໍ່ສູ້ເຫຼົ່ານັ້ນເປັນຜູ້ມີລິດເດດ, ວິເສດທີ່ສຸດຄື: ທັງຄົງ, ທັງມີມົນເລື່ອມ,ຟັນບໍ່ເຂົ້າຂ້າບໍ່ຕາຍ, ໄປມາທາງໃດກໍບໍ່ມີຜູ້ຮູ້ເຫັນ ນີ້ແມ່ນສະແດງໃຫ້ເຫັນຄວາມເຄົາລົບນັບຖືແລະຍ້ອງຍໍສັນລະເສີນທີ່ປະຊາຊົນມີຕໍ່ນັກສູ້ກູ້ຊາດຜູ້ອົງອາດກ້າຫານທີ່ມີຄຸນດີຄຸນງາມຕໍ່ຊາດຕໍ່ປະຊາຊົນ. ເຖິງແມ່ນວ່າຂະບວນການຕໍ່ສູ້ເຫຼົ່ານັ້ນຈະຖືກປາບປາມແລະຖືກປະລາໄຊ, ທັງຜູ້ດີເດັ່ນໃນຂະບວນການເຫຼົ່ານັ້ນກໍຖືກຈັບກຸມຄຸມຂັງແລະຖືກຂ້າຕາຍກໍ່ຕາມແຕ່ພື້ນສືບໄດ້ປັ້ນແຕ່ງໃຫ້ເຂົ້າເຈົ້າເປັນຜູ້ຍືນຍົງຄົງຕົວແລະມີຊີວິດຊີວາຕິດພັນກັບການຕໍ່ສູ້ກູ້ຊາດ ຂອງປະຊາຊົນເຮົາຕະຫຼອດມາ.ນີ້ແມ່ນສະແດງເຖິງຄວາມມຸ່ງມາດປາຖະໜາຂອງປະຊາຊົນທີ່ຢາກເອົາຊະນະພວກຮຸກຮານຢູ່ຕະຫຼອດມາ,ທັງສະແດງເຖິງນ້ຳໃຈຕໍ່ສູ້ພິລະອາດຫານຂອງເຂົ້າເຈົ້າທີ່ບໍ່ຍອມຈຳນົນຕໍ່ສັດຕູຕົວໃດໆ, ເຂົ້າເຈົ້າເຊື່ອໝັ້ນວ່າ ນັກຕໍ່ສູ້ກູ້ຊາດບໍ່ມີວັນຕາຍ ແລະ ການຕໍ່ສູ້ຕ້ອງໄດ້ຮັບໄຊຊະນະຢ່າງແນ່ນອນ.

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
- ຄວາມໝາຍ ແລະ ຈຸດພິເສດຂອງພື້ນສືບ
- ການກຳເນີດ ແລະ ການຂະຫຍາຍຕົວຂອງພື້ນສືບ

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ແລະຄະນະ. (2001). ວັນນະຄະດີລາວ ລະຫັດ 630LI 222. ວິທະຍາໄລ ວິທະຍາສາດພື້ນຖານ. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ.

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ບໍ່ແສງຄໍາ ວົງດາລາ ແລະຄະນະ. (1987). ວັນນະຄະດີລາວ. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ.

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈໍາວິຊາ



ປທ. ສົມທະເພີຍ ສີວົງສັກ